ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ເລກທີ 786 /ຫກ

ນະຄອນຫລວງວຽງຈັນ, ວັນທີ 20 ຕຸລາ 2025

# ແຈ້ງການ

ເຖິງ: ບັນດາບໍລິສັດ ແລະ ໂຮງພິມ ທີ່ນັບຖື.

ເລື່ອງ: ເຂົ້າຮ່ວມການປະມູນຈັດພິມໃບຢັ້ງຢືນຫຼຽນໄຊແຮງງານຊັ້ນ II ແລະ ຕັດຂອບແວ່ນໃສ່ໃບຢັ້ງຢືນ ຂອງອານຸກຳມະການແຂ່ງຂັນ ແລະ ຍ້ອງຍໍ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການ ຄະນະຈັດຕັ້ງສູນກາງພັກ;
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017.

ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຂໍຖືເປັນກຽດແຈ້ງມາຍັງທ່ານວ່າ: ໜ່ວຍງານແຂ່ງຂັນ ແລະ ຍ້ອງຍໍ ໄດ້ຮັບມີແຜນຈັດພິມໃບຢັ້ງຢືນຫຼຽນໄຊແຮງງານ ຊັ້ນ II, ຫຼຽນກາແຮງງານ ແລະ ຂອບແວ່ນໃສ່ໃບຢັ້ງຢືນຂອງອານຸກຳມະການແຂ່ງຂັ້ນ-ຍ້ອງຍໍ ເພື່ອຮັບໃຊ້ບັ້ນຍ້ອງຍໍຜົນງານການເປັນປະທານອາຊຽນປີ 2024. ສະນັ້ນ; ຫ້ອງການ ຈຶ່ງຂໍຖືເປັນກຽດເຊີນບໍລິສັດ ແລະ ໂຮງພິມ ເຂົ້າຮ່ວມການປະມູນໃນຄັ້ງນີ້. ລາຍລະອຽດມີດັ່ງນີ້:

❖ **ເງື່ອນໄຂຕ່າງໆຂອງບໍລິສັດ:**

1. ເປັນບໍລິສັດດຳເນີນທຸລະກິດທີ່ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ;
2. ສາມາດຮອງຮັບການຊໍາລະດ້ວຍລະບົບເງິນໂອນຕາມງົບປະມານຂອງລັດ;
3. ສາມາດສະໜອງສິນຄ້າໃຫ້ໄດ້ຕາມແຜນຄວາມຕ້ອງການ ແລະ ໃຫ້ທ່ວງທັນກັບເວລາທີ່ກຳນົດໄວ້;
4. ເອກະສານທີ່ຈຳເປັນນຳມາເພື່ອສະແດງຕໍ່ຄະນະຮັບຜິດຊອບການຈັດຊື້-ຈັດຈ້າງມີ: 1.ໃບສະເໜີລາຄາ, 2.ໃບທະບຽນວິສາຫາກິດ, 3.ໃບອະນຸຍາດດຳເນີນທຸລະກິດ, 4.ໃບຢັ້ງຢືນການມອບພັນທະອາກອນປີ 2024 ແຊັກວິຊາຄ້ຳປະກັນຊອງປະມູນ 2% ຂອງມູນຄ່າ ແລະ ອື່ນໆ ທີ່ກ່ຽວຂ້ອງກັບບໍລິສັດ.

❖ **ກຳນົດເວລາ:**

- ກຳນົດຂາຍຊອງປະມູນ ເລີ່ມແຕ່ ວັນທີ 20 ຕຸລາ 2025 ຫາ ວັນທີ 07 ພະຈິກ 2025 ໃນໂມງລັດຖະການ ທີ່ຫ້ອງການ ຄະນະຈັດຕັ້ງສູນກາງພັກ (ໃນຮົ້ວສນຍ).
- ກຳນົດສົ່ງໃບສະເໜີລາຄາວັນທີ 10 ພະຈິກ 2025ໃນໂມງລັດຖະການ.ທີ່ຫ້ອງການ ຄະນະຈັດຕັ້ງສູນກາງພັກ.
- ເປີດຊອງປະມູນວັນທີ 11 ພະຈິກ 2025 ເວລາ: 9:00 ຢູ່ທີ່ ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຫ້ອງປະຊຸມຊັ້ນ 03.(ໃນຮົ້ວສນຍ)

❖ ແຜນຈັດຊື້ລະອຽດໄດ້ຕິດຄັດພ້ອມກັບຊອງປະມູນ(ລາຄາຊອງປະມູນ 1.000.000 ກີບ/ຊອງ)

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນໃນຄັ້ງນີ້ນຳພວກເຮົາດ້ວຍ.

ຫົວໜ້າຫ້ອງການ

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

ວັນນະ ບຸບຜາ

ເບີໂທຕິດຕໍ່:ທ. ໂລກົ້ 020 29991994

สแกนด้วย CamScanner